ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************

ກະຊວງອຸດສາຫະກຳ ແລະ ການຄ້າ                                                                 ເລກທີ 1577 /ອຄ

ນະຄອນຫລວງວຽງຈັນ, ວັນທີ 05 ພະຈິກ 2006

# ຄຳແນະນຳ

## ການຈັດຕັ້ງ ຜັນຂະຫຍາຍ ເນື້ອໃນຈິດໃຈ ຄຳສັ່ງ ນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວິສາຫະກິດ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005 ;
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 37/ນຍ, ລົງວັນທີ 24 ຕຸລາ 2006, ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ ;
- ອີງຕາມດຳລັດ, ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ .

ເພື່ອເຮັດໃຫ້ ເນື້ອໃນ ຂອງກົດມາຍວິສາຫະກິດ ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 37/ນຍ, ລົງວັນທີ 24 ຕຸລາ 2006, ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວິສາຫະກິດ ປະກົດຜົນເປັນຈິງ, ແກ້ໄຂອຸປະສັກກີດຂວາງ ຕໍ່ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດທຸກຮູບແບບ, ສ້າງສະພາບແວດລ້ອມທາງດ້ານທຸລະກິດທີ່ດີ ສົ່ງເສີມການລົງທຶນ ແລະ ການປະກອບອາຊີບຂອງປະຊາຊົນລາວບັນດາເຜົ່າສ້າງວຽກເຮັດງານທຳ, ສ້າງລາຍໄດ້, ຫລຸດຜ່ອນຄວາມທຸກຍາກ ເຮັດໃຫ້ເສດຖະກິດຂອງຊາດຂະຫຍາຍຕົວໜັກແໜ້ນ, ສະນັ້ນ ທຸກພາກສ່ວນທີ່ກ່ຽວຂ້ອງຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງຮີບຮ້ອນ ເອົາໃຈໃສ່ຈັດຕັ້ງປະຕິບັດ ບັນດາວຽກງານລະອຽດດັ່ງນີ້ :

1. ໃຫ້ກົມຈັດຕັ້ງ ແລະ ພະນັກງານ ປະສານສົມທົບ ກັບກົມການຄ້າພາຍໃນ ປັບປຸງພະແນກທະບຽນວິສາຫະກິດ ໃຫ້ກາຍເປັນຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ(Enterprise Registry Office), ຊັບຊ້ອນບຸກຄະລະກອນ ທີ່ເໝາະສົມ ບັນຈຸເຂົ້າໃນກົງຈັກດັ່ງກ່າວໃຫ້ຖືກຕ້ອງຕາມຕຳແໜ່ງງານ ແລະ ວຸດທິການສຶກສາ ຈາກນັ້ນກໍ່ປະສານ ກັບພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ແລະ ນະຄອນຫລວງ ເພື່ອປັບປຸງພາກສ່ວນຮັບຜິດຊອບວຽກງານທະບຽນວິສາຫະກິດໃຫ້ເຂັ້ມແຂງ ແລະ ສາມາດຮອງຮັບກັບຄວາມຮຽກຮ້ອງຕ້ອງການຂອງວຽກງານທະບຽນວິສາຫະກິດ ໃນໄລຍະໃໝ່ ໃຫ້ໄດ້ຮັບຜົນດີ ເທື່ອລະກ້າວ ;

2. ໃຫ້ກົມການຄ້າພາຍໃນ ຄົ້ນຄ້ວາ ແລະ ສ້າງທຸກເງື່ອນໄຂ ເພື່ອປັບປຸງຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດໃຫ້ກາຍເປັນຖານຂໍ້ມູນແຫ່ງຊາດ (National database) ກ່ຽວກັບທະບຽນວິສາຫະກິດ, ປະສານກັບຫ້ອງການ SMEs, ທະນາຄານ, ພາກສ່ວນສ່ວຍສາອາກອນ, ພາສີ, ສູນສະຖິຕິແຫ່ງຊາດ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງຄົ້ນຄ້ວາ ສ້າງເຄືອຂ່າຍຂໍ້ມູນເຊື່ອມຍົງຊຶ່ງກັນ ແລະ ກັນເທື່ອລະກ້າວ, ສ້າງລະບົບເລກລະຫັດ(Code) ປະຈຳສະເພາະແຕ່ລະວິສາຫະກິດ ເພື່ອໃຊ້ສຳລັບການກວດສອບ, ຕິດຕາມ ຫລື ງ່າຍແກ່ການຄຸ້ມຄອງເປັນເອກະພາບກັນລະຫວ່າງຂະແໜງການທີ່ກ່ຽວຂ້ອງ ແລະ ລະຫວ່າງກະຊວງ " ອຄ " ກັບ ພະແນກ " ອຄ " ທ້ອງຖິ່ນ ;

3. ໃຫ້ກົມການຄ້າພາຍໃນ ປະສານກັບພາກສ່ວນຄຸ້ມຄອງການລົງທຶນດພາກສ່ວນສ່ວຍສາອາກອນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອສ້າງຄວາມເປັນເອກະພາບ ໃນການຂຶ້ນທະບຽນວິສາຫະກິດ ລະບົບປະຕູດຽວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ແລະ 16 ຂອງກົດໝາຍວິສາຫະກິດ ແລະ ຂໍ້ 6 ຂອງຄຳສັ່ງນາຍົກລັດຖະມົນຕີ ແນ່ໃສ່ເຮັດໃຫ້ການຂຶ້ນທະບຽນວິສາຫະກິດ ລວມສູນຢູ່ຈຸດດຽວ ສະດວກ ງ່າຍດາຍທີ່ສຸດ ທັງທາງດ້ານເວລາການປະກອບເອກະສານ, ການເສັຍຄ່າທຳນຽມ ແລະ ການຖ້າຮັບເອົາໃບທະບຽນວິສາຫະກິດ ຄົບຊຸດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງກົດໝາຍວິສາຫະກິດ ຕິດພັນກັບສິ່ງນີ້, ບັນຫາທີ່ຕ້ອງເອົາໃຈໃສ່ກ່ວາໝູ່ ແມ່ນການສ້າງຄວາມເປັນເອກະພາບຮ່ວມກັນ ໃນການເຮັດໃຫ້ການພິຈາລະນາ ການອອກອະນຸຍາດຂອງບັນດາຂະແໜງການກ່ຽວຂ້ອງ ໃນທຸລະກິດທີ່ຢູ່ໃນ ບັນຊີປະເພດທຸລະກິດຄວບຄຸມ (Nagative List) ເຂົ້າສູ່ລະບົບການພິຈາລະນາແບບປະຕູດຽວ;

(ແຜນວາດການຂຶ້ນທະບຽນວິສາຫະກິດ ປະກອບຄຳອະທິບາຍຫຍໍ້ - ຕາມເນື້ອໃນຈິດໃຈກົດໝາຍວິສາຫະກິດໃໝ່ ຄັດຕິດມາພ້ອມນີ້) ;

4. ໃຫ້ກົມການຄ້າພາຍໃນ ແລະ ຫ້ອງການ SMEs ຮີບຮ້ອນ ປະສານ ແລະ ຊຸກຍູ້ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຄົ້ນຄ້ວາບັນຊີປະເພດທຸລະກິດຄວບຄຸມ ຫລື (Nagative List) ທີ່ຕ້ອງຜ່ານການກວດສອບຂອງຂະແໜງການກ່ອນການຂຶ້ນທະບຽນວິສາຫະກິດ ເພື່ອສະເໜີລັດຖະບານຮັບຮອງ ໃຫ້ທັນຕາມກຳນົດເວລາທີ່ໄດ້ບົ່ງໄວ້ໃນຂໍ້ 2 ຂອງຄຳສັ່ງນາຍົກລັດຖະມົນຕີ ເພື່ອເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕະບັດ ການຂຶ້ນທະບຽນ ຕາມກົດໝາຍວິສາຫະກິດໃໝ່. ພາຍຫລັງ ລັດຖະບານຮັບຮອງ ໃຫ້ກົມການຄ້າພາຍໃນ ລວບລວມບັນຊີ ດັ່ງກ່າວ ແຈ້ງໃຫ້ສັງຄົມຊາບ.

5. ໃຫ້ກົມອຸດສາຫະກຳ ແລະ ກົມການຄ້າພາຍໃນ ປະສານກັນ ປັບປຸງລະບົບການຂຶ້ນທະບຽນວິສາຫະກິດ ແລະ ການອອກອະນຸຍາດດຳເນີນກິດຈະການໂຮງງານ ໃຫ້ສະດວກ ວ່ອງໄວ ລົບລ້າງຂັ້ນຂອດ, ເອກະສານຊ້ຳຊ້ອນ ແລະ ການຕໍ່ອະນຸຍາດຕ່າງໆ ທີ່ເປັນອຸປະສັກ ສ້າງຄວາມລຳຄານແກ່ທຸລະກິດ ໃຫ້ໄດ້ຢ່າງຈິງຈັ່ງ;

6. ໃຫ້ສະຖາບັນຄົ້ນຄ້ວາເສດຖະກິດການຄ້າ ປະສານກັບກົມການຄ້າພາຍໃນ ຄົ້ນຄ້ວາແບບຟອມເອກະສານຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ສຳລັບແຕ່ລະຮູບແບບ ແລະ ຮູບການວິສາຫະກິດ, ຄ່າທຳນຽມ ແລະ ເວລາ ທີ່ໃຊ້ພິຈາລະນາທະບຽນວິສາຫະກິດ ໃນແຕ່ລະຂັ້ນຕອນ ເພື່ອສະເໜີກະຊວງປະກາດໃຊ້ ແລະ ປະຕິບັດໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ;

7. ໃນໄລຍະລໍຖ້າການຊີ້ນຳລະອຽດຈາກກະຊວງອຸດສາຫະກຳ ແລະ ການຄ້າ, ໃຫ້ພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ແລະ ນະຄອນຫລວງກະກຽມເງື່ອນໄຂຂັ້ນພື້ນຖານຕ່າງໆ(ທັງທາງດ້ານການຈັດຕັ້ງ, ບຸກຄະລະກອນທີ່ເໝາະສົມ ແລະ ອື່ນໆ) ເພື່ອຮອງຮັບການຫັນສູ່ລະບົບການຂຶ້ນທະບຽນວິສາຫະກິດ ຕາມກົດໝາຍໃໝ່;

8. ໃຫ້ສະຖາບັນຄົ້ນຄ້ວາເສດຖະກິດການຄ້າ ເປັນເຈົ້າການ ປະສານກັບພາກສ່ວນທີ່ກ່ຽວຂ້ອງ(ລວມທັງພາກທຸລະກິດ)ຄົ້ນຄ້ວາບັນດາບັນຫາທີ່ເຫັນວ່າເປັນອຸປະສັກ, ສ້າງຄວາມລຳຄານແກ່ການປະກອບອາຊີບ ຂອງປະຊາຊົນ, ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດຂອງວິສາຫະກິດ(ຕາມທີ່ໄດ້ໃນຂໍ້ 9 ຂອງຄຳສັ່ງນາຍົກລັດຖະມົນຕີ) ເພື່ອສະເໜີຂັ້ນເທິງ ກ່ຽວກັບມາດຕະການ ໃນການປັບປຸງ ແກ້ໄຂຢ່າງຕໍ່ເນື່ອງໃນແຕ່ໄລໄລຍະ ;

9. ພາຍຫລັງວຽກຕ່າງໆຕາມທີ່ໄດ້ກ່າວມາໃນຂໍ້ 1 ເຖິງ ຂໍ້ 7 ຂ້າງເທິງໄດ້ຮັບການແກ້ໄຂ ຫລື ປະຕິບັດສຳເລັດແລ້ວໃຫ້ກົມການຄ້າພາຍໃນ ຄົ້ນຄ້ວາຮ່າງແຈ້ງການເພື່ອແຈ້ງໃຫ້ສັງຄົມຊາບ ກ່ຽວກັບຂັ້ນຕອນ ແລະ ໄລຍະເວລາ ສຳລັບການເລີ່ມຕົ້ນການຂຶ້ນທະບຽນວິສາຫະກິດ ພາຍໃຕ້ເງື່ອນໄຂ ຂອງກົດໝາຍວິສາຫະກິດໃໝ່ ໂດຍໄວ;

10. ໃນການຈັດຕັ້ງ ຜັນຂະຫຍາຍກົດໝາຍວິສາຫະກິດນັ້ນ ທຸກພາກສ່ວນທີ່ກ່ຽວຂ້ອງຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງປັບປຸງທັດສະນະໃໝ່ ໃຫ້ຖືກຕ້ອງ, ເຊື່ອມຊຶມ ແລະ ກຳແໜ້ນ ເນື້ອໃນ ຈິດໃຈອັນເປັນຫລັກການພື້ນຖານ ຂອງກົດໝາຍວ່າດ້ວຍວິສາຫະກິດໃໝ່ 3 ປະການ ດັ່ງນີ້:

- ຫັນຈາກລະບົບການຂຶ້ນທະບຽນ ແລະ ຄຸ້ມຄອງທຸລະກິດ ແບບຄວບຄຸມ ສູ່ລະບົບສົ່ງເສີມ, ສ້າງສິ່ງເອື້ອອຳນວຍຢ່າງເຕັມສ່ວນ ແກ່ການປະກອບອາຊີບ ຂອງປະຊາຊົນບັນດາເຜົ່າ, ເຮັດໃຫ້ພົນລະເມືອງທຸລະກິດຂອງປະເທດຂະຫຍາຍຕົວ ທັງປະລິມານ ແລະ ຄຸນນະພາບ ດ້ວຍລະບຽບການ ແລະ ການໃຫ້ບໍລິການທີ່ສະດວກ, ງ່າຍດາຍ ແລະ ວ່ອງໄວທີ່ສຸດ;

- ການຂຶ້ນທະບຽນວິສາຫະກິດ ບໍ່ແມ່ນການ **“ ຂໍ ”** ສິດທິພິເສດ ໃນການດຳເນີນທຸລະກິດ ໃດໜຶ່ງ, ແຕ່ເປັນພຽງການ “ ແຈ້ງ ” ຂຶ້ນທະບຽນ ຊຶ່ງເປັນການນຳໃຊ້ສິດທິພື້ນຖານຂອງປະຊາຊົນບັນດາເຜົ່າ ໃຫ້ເຈົ້າໜ້າທີ່ທະບຽນຊາບ ແລະ ຮັບຮອງກ່ຽວກັບການປະກອບອາຊີບ ຫລື ການສ້າງຕັ້ງວິສາຫະກິດຢ່າງຖືກຕ້ອງ ຂອງຂະເຈົ້າ ເພື່ອໃຫ້ລັດຕິດຕາມການປະຕິບັດສິດ, ພັນທະ ແລະ ໃຫ້ການປົກປ້ອງ ຫລື ຄຸ້ມຄອງຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງເວັ້ນເສຍແຕ່ການປະກອບອາຊີບໃນບາງປະເພດທຸລະກິດລັດທີ່ຄຸ້ມຄອງ, ສະນັ້ນເຈົ້າໜ້າທີ່ທະບຽນວິສາຫະກິດ ຫລື ຜູ້ຄົ້ນຄ້ວາອອກອະນຸຍາດ ຕ້ອງເປັນຜູ້ບໍລິການຮັບໃຊ້ປະຊາຊົນ ຢ່າງແທ້ຈິງ;

- ຕ້ອງຕີຖອຍ ແລະ ມ້າງແນວຄິດ ສວຍໃຊ້ ເພື່ອຫາຜົນປະໂຫຍດ ຈາກຂໍ້ອ້າງດ້ານວິຊາການຕ່າງໆ ທີ່ບໍ່ສົມເຫດສົມຜົນ ເພື່ອສ້າງກົນໄກ ຫລື ຂັ້ນຕອນທາງບໍລິຫານ ທີ່ສະລັບຊັບຊ້ອນ ຫຍຸ້ງຍາກ ສ້າງຄວາມລຳຄານ ແກ່ການປະກອບອາຊີບຂອງປະຊາຊົນບັນດາເຜົ່າເວັ້ນເສຍແຕ່ກໍລະນີຈຳເປັນກ່ຽວຂ້ອງກັບຜົນປະໂຫຍດລວມຂອງຊາດ ຫລື ເປັນພັນທະກໍລະນີ ທີ່ປະເທດເຮົາໄດ້ໃຫ້ສັດຕະຍາບັນ ຊຶ່ງຈະມີການຊີ້ນຳສະເພາະຕ່າງຫາກ;

11. ໃຫ້ທຸກພາກສ່ວນທີ່ກ່າວມາຊາບ ແລະ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ ແລະ ໃນເວລາຈັດຕັ້ງປະຕິບັດລະອຽດນັ້ນ, ຕ້ອງປະສານສົມທົບຢ່າງໃກ້ຊິດ ກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ພ້ອມທັງຂໍທິດຊີ້ນຳ ຈາກຂັ້ນເທິງ ຢ່າງເປັນປະຈຳ.

ຕ. ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ

**ສຽວສະຫວາດ ສະແຫວງສຶກສາ**